ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການ... ເລກທີ 0760 ...
ວັນທີ 06 APR 2018

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0397 /ອຄ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 04 ເມສາ 2018

# ຂໍ້ຕົກລົງ

## ວ່າດ້ວຍ ການແຕ່ງຕັ້ງຄະນະປະສານງານ ການບໍລິການ ລົງທຶນປະຕູດຽວຂອງກະຊວງອຸດສາຫະກຳ ແລະ ການຄ້າ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ, ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະຄຸ້ມຄອງການລົງທຶນ;
- ອີງຕາມ ໜັງສືສະເໜີຂອງກະຊວງແຜນການ ແລະ ການລົງທຶນ, ສະບັບເລກທີ 2805/ຜທ, ລົງວັນທີ 14 ພະຈິກ 2017

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະປະສານງານ ການບໍລິການ ການລົງທຶນປະຕູດຽວຂອງກະຊວງອຸດສາຫະກຳ ແລະ ການຄ້າ, ຊຶ່ງປະກອບມີ ບັນດາທ່ານ ດັ່ງນີ້:

1. ທ່ານ ພັນທອງ ພົດທຸມມາ ຮອງລັດຖະມົນຕີ — ເປັນຫົວໜ້າຄະນະ;
2. ທ່ານ ຫົວໜ້າຫ້ອງການ — ເປັນຮອງຫົວໜ້າຄະນະ;
3. ທ່ານ ຫົວໜ້າກົມທະບຽນ ແລະຄຸ້ມຄອງວິສາຫະກິດ — ເປັນຄະນະ;
4. ທ່ານ ຫົວໜ້າກົມອຸດສາຫະກຳ ແລະຫັດຖະກຳ — ເປັນຄະນະ;
5. ທ່ານ ຫົວໜ້າກົມການຄ້າພາຍໃນ — ເປັນຄະນະ;
6. ທ່ານ ຫົວໜ້າກົມການນຳເຂົ້າ ແລະສົ່ງອອກ — ເປັນຄະນະ;
7. ທ່ານ ຫົວໜ້າກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະກາງ — ເປັນຄະນະ.

**ມາດຕາ 2** ຄະນະປະສານງານດັ່ງກ່າວ ມີໜ້າທີ່ເຮັດວຽກຮ່ວມກັບຄະນະກຳມະການສົ່ງເສີມ ແລະຄຸ້ມຄອງການລົງທຶນ ໃນການຄົ້ນຄວ້າ, ປະສານສົມທົບ ແລະ ສະໜອງຂໍ້ມູນ ກ່ຽວກັບວຽກງານຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ບົນພື້ນຖານການແບ່ງງານ ແບ່ງຄວາມຮັບຜິດຊອບ ພາຍໃນໃຫ້ລະອຽດ.

**ມາດຕາ 3** ຫ້ອງການ, ກົມທະບຽນ ແລະຄຸ້ມຄອງວິສາຫະກິດ, ກົມອຸດສາຫະກຳ, ກົມການຄ້າພາຍໃນ, ກົມການນຳເຂົ້າ ແລະສົ່ງອອກ, ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະກາງ, ບັນດາທ່ານທີ່ຖືກແຕ່ງຕັ້ງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຜົນດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ. ຯ

ລັດຖະມົນຕີ

ບ ເຂັມມະນີ ພົນເສນາ

**ບ່ອນນຳສົ່ງ:**

- ກະຊວງແຜນການ ແລະການລົງທຶນ;